ທຄຕລ ຈັບມື Mastercard ເປີດໂຕບັດ “Platinum SmartPay” ຍົກລະດັບການໃຊ້ຈ່າຍແບບຜ່ອນສະບາຍ ໃຊ້ໄດ້ທົ່ວໂລກ

BCEL Launches "Mastercard Platinum SmartPay" Card, Elevating Global Spending with Flexible Installments

ໃນວັນທີ 28 ສິງຫາ 2026, **ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຮ່ວມກັບ Mastercard** ໄດ້ຈັດພິທີເປີດໂຕຜະລິດຕະພັນໃໝ່ລ່າສຸດ **“ບັດ BCEL Mastercard Platinum SmartPay”** ຢ່າງເປັນທາງການ ທີ່ໂຮງແຮມ ສຸພັດຕຣາ ເພື່ອຕອບໂຈທຍ໌ການໃຊ້ຊີວິດຍຸກໃໝ່ ແລະ ເພີ່ມສະພາບຄ່ອງທາງການເງິນໃຫ້ຄ່ອງຕົວຍິ່ງຂຶ້ນ.

On August 28, 2026, **Banque Pour Le Commerce Exterieur Lao Public (BCEL),** in partnership with Mastercard, officially unveiled the **new BCEL Mastercard Platinum SmartPay credit card** at the Soupattra Hotel, delivering greater financial flexibility and elevated lifestyle convenience.





ບັດເຄຣດິດ BCEL Mastercard Platinum SmartPay ມາພ້ອມຈຸດເດັ່ນທີ່ອອກແບບມາເພື່ອຄວາມສະດວກສະບາຍສູງສຸດ:

- ຜ່ອນຊຳລະຍືດຫຍຸ່ນ: ປ່ຽນທຸກຍອດໃຊ້ຈ່າຍຕັ້ງແຕ່ $500 ຫາ $10,000 ໃຫ້ເປັນງວດຜ່ອນເບົາໆ ໄດ້ 3, 6 ຫຼື 9 ເດືອນ.
- ດອກເບ້ຍສຸດພິເສດ: ອັດຕາດອກເບ້ຍເລີ່ມຕົ້ນພຽງ 0.65% ຕໍ່ເດືອນ ພ້ອມຄ່າທຳນຽມສຸດຄຸ້ມຄ່າ.
- ໃຊ້ໄດ້ທົ່ວໂລກ: ຮອງຮັບທັງການຊອບປິ້ງອອນລາຍ, ການຮູດບັດ ແລະ ລະບົບແຕະຊຳລະ contactless ຢູ່ທຸກຮ້ານຄ້າທີ່ຮອງຮັບ Mastercard ທົ່ວໂລກ.
- ດີໄຊຮີມ່ຽມ: ຮູບລັກສະນະບັດໂດດເດັ່ນ, ທັນສະໄໝ ແລະ ສະທ້ອນເຖິງຄວາມມີລະດັບ.

Engineered to optimize purchasing power and cash flow, the BCEL Mastercard Platinum SmartPay card features:

- Flexible Installment Plans: Convert purchases between $500 and $10,000 into manageable monthly installments of 3, 6, or 9 months.
- Competitive Rates: Enjoy interest rates starting from just 0.65% per month, paired with cost-effective fees.
- Global Acceptance: Seamlessly shop online, swipe, or tap via contactless payment at millions of Mastercard-accepting merchants worldwide.
- Sleek Premium Design: A modern, distinct card aesthetic tailored to a sophisticated lifestyle.



